multicultural communication

REVIEWED November 2004
NSW Multicultural Health Communication Service

Laotian
November 2000
[BHC-5695]

# ຈົ່ງມາທຳຄວາມເຂົ້າໃຈກ່ຽວກັບພັຍອັນຕຣາຍຂອງ ເອັກສເຕຊີ
# Ecstasy - understanding the risks

ເອັກສເຕຊີ ແມ່ນຢາເສບຕິດທີ່ຜິດກົດໝາຍຊຶ່ງໃຊ້ກັນໃນກຸ່ມຊາວໜຸ່ມບາງພວກ. ແຕ່ວ່າມັນແຕກຕ່າງກັບຢາເສບ ຕິດຊນິດອື່ນໆເຊັ່ນ ກັນຊາ, ເຮໂຣອິນແລະໂຄເຄນ, ເອັກສເຕຊີ ບໍ່ໄດ້ມາຈາກພືດ. ແທນທີ່ຈະຜລິດຈາກພືດ ມັນເປັນຜລິຕພັນທີ່ຜິດກົດໝາຍແລະຜລິດຂຶ້ນ ຈາກການປະສົມເຄມີ ຫຼາຍຊນິດໃສ່ກັນ.

## ເອັກສເຕຊີແມ່ນຫຍັງ?

ໃນຂນະທີ່ສ່ວນປະກອບຕ່າງໆຂອງເອັກສເຕຊີແຕກຕ່າງກັນໄປ, ແຕ່ໂດຍທົ່ວໄປແລ້ວ ແມ່ນຜລິດ ຈາກເຄມີທີ່ຄ້າຍຄື ກັບຢາສອງປະເພດນີ້

- ແອມເຟຕາມີນ (amphetamines) ຊຶ່ງບາງຄັ້ງກໍເອີ້ນວ່າ ສປີດ (speed) - ຊຶ່ງແມ່ນຢາກະຕຸ້ນ ຊນິດນຶ່ງທີ່ສາມາດເສີມກຳລັງແລະເຮັດໃຫ້ຄົນບໍ່ຢາກນອນ.
- ຮາລລູຊີໂນເຈີນ (hallucinogens) - ຢານີ້ສາມາດເຮັດໃຫ້ຄົນເຫັນຫຼືໄດ້ຍິນສິ່ງທີ່ບໍ່ເປັນຈິງ, ຫຼື ເຮັດໃຫ້ເຫັນຫຼືໄດ້ຍິນສິ່ງທີ່ຜິດແປກໄປຈາກຄວາມຈິງ. ຍົກຕົວຢ່າງ, ບາງຄົນທີ່ໃຊ້ຢາຮາລລູຊີໂນເຈີນ ອາດເຫັນຈອກກາເຟຕົງເອງ, ຫຼື ຄິດວ່າລາຍຢູ່ຝາຕົງໄປມາ.

## ຄົນໃຊ້ເອັກສເຕຊີແບບໃດ?

ຕາມປົກກະຕິ ຈະກືນກິນຢາເມັດນ້ອຍໆສີຂາວຫຼືສີເຫຼືອງຊຶ່ງມີມາໃນຮູບຮ່າງແລະຂນາດຕ່າງໆກັນ. ບາງຄົນກໍສັກ ເອົາກໍມີ.

## ຜົນສະທ້ອນຂອງຢາເອັກສເຕຊີມີຫຍັງແດ່?

ຜົນສະທ້ອນອາດແຕກຕ່າງກັນໄປຕາມແຕ່ສ່ວນປະກອບຂອງຢາແລະຕາມຄົນທີ່ໃຊ້ຢານັ້ນ. ຜົນຕ່າງໆກໍມີເຊັ່ນ ຮູ້ສຶກດີໃຈ, ໝັ້ນໃຈ ແລະ ເກີດຄວາມຮັກໃຄ່. ແຕ່ວ່າມັນອາດເຮັດໃຫ້ຄົນໃຊ້ຢາ ນັ້ນຮູ້ສຶກ ເປັນ ກັງວົນ, ວິຕົກເກີນເຫດ (ຢ້ານຄົນອື່ນມາທຳຮ້າຍຕົນ) ແລະ ເກີດຄວາມກົດດັນ. ຜົນສະທ້ອນ ລະຍະ ສັ້ນກໍມີເຊັ່ນ:

- ຫົວໃຈເຕັ້ນແຮງຂຶ້ນແລະຄວາມດັນໂລຫິດສູງຂຶ້ນ
- ອຸນຫະພູມໃນຮ່າງກາຍສູງຂຶ້ນແລະເຫື່ອອອກ
- ຮ່າງກາຍຂາດນ້ຳ - ນ້ຳໃນຮ່າງກາຍເຫືອດແຫ້ງ
- ກັດແຂ້ວແລະກັດຄາງກະໄຕ
- ປັ້ນທ້ອງ

## ເອັກສເຕຊີອັນຕຣາຍປານໃດ?

ບາງຄົນຕາຍຍ້ອນຢາເອັກສເຕຊີເນື່ອງຈາກຜົນສະທ້ອນຢ່າງຮຸນແຮງ. ເຖິງວ່າຈະບໍ່ມີການຕາຍເກີດຂຶ້ນເລື້ອຍໆ ແຕ່ມັນກໍເປັນການຍາກທີ່ຈະເດົາວ່າຢານີ້ມີອັນຕຣາຍຫຼາຍປານໃດ. ການຕາຍ ບາງເທື່ອເກີດ ຂຶ້ນ ຍ້ອນ:

- ຮ່າງກາຍຮ້ອນໂພດ - ການໃຊ້ຢາເອັກສເຕຊີປະສົມກັບການເຕັ້ນລຳເປັນເວລາຍາວນານ ອາດ ເຮັດ ໃຫ້ອຸນຫະພູມໃນຮ່າງກາຍສູງຂຶ້ນ, ແລະເຮັດໃຫ້ເກີດອາການຂາດນ້ຳ. ຜູ້ໃຊ້ເອັກສເຕຊີຄວນ ດື່ມນ້ຳ 500ml ທຸກໆຊົ່ວໂມງຖ້າເຕັ້ນລຳຫຼືຍ່າງໄປມາ, ແລະ ຄວນດື່ມນ້ຳ 250ml ທຸກໆຊົ່ວໂມງ ຖ້າບໍ່ໄດ້ເຕັ້ນລຳ.
- ດື່ມນ້ຳຫຼາຍໂພດ - ເປັນສິ່ງສຳຄັນທີ່ຈະຕ້ອງບໍ່ດື່ມນ້ຳຫຼາຍໂພດບາດດຽວ ເພາະເຄີຍມີຄົນຕາຍ ຍ້ອນວ່າຖ້ານ້ຳຫຼາຍໂພດມັນຈະໄປກະທົບກະເທືອນສມອງ, ເຮັດໃຫ້ເກີດອາການໂຄມ່າ.
- ເປັນສິ່ງສຳຄັນທີ່ຈະບໍ່ຂັບຣົດຫຼັງຈາກໃຊ້ຢາເອັກສເຕຊີ ແລະບໍ່ໃຊ້ຢານີ້ປະສົມກັນກັບຢາອື່ນໆແລະບໍ່ໃຊ້ເຂັມ ສັກຢາຮ່ວມກັນ ຖ້າໃຊ້ໂດຍການສັກເອົາ. ຜູ້ທີ່ປວັດສ່ວນຕົວຫຼືຄອບຄົວມີປວັດເປັນ ໂຣກຈິດ, ໂຣກກັງວົນ, ໂຣກຕື່ນກົວ, ໂຣກຫົວໃຈ, ຄວາມດັນໂລຫິດສູງ, ເບົາຫວານ, ມີບັນຫາ ກ່ຽວກັບຕັບ ຫຼື ເປັນລົມຊັກບໍ່ຄວນໃຊ້ເອັກສເຕຊີ.

## ເອັກສເຕຊີເຮັດໃຫ້ຕິດບໍ?

ເປັນທີ່ເຊື່ອກັນວ່າ ເອັກສເຕຊີ ບໍ່ເຮັດໃຫ້ຕິດທາງຮ່າງກາຍເຊັ່ນເຮໂຣອີນຫຼືນິໂຄຕິນ, ເຊັ່ນວ່າ, ເຮັດໃຫ້ ເກີດອາການ ງ່ວມເຫງົາເມື່ອຢຸດກິນຢາ. ຢ່າງໃດກໍດີ, ບາງຄົນກໍຕິດຢາເອັກສເຕຊີໂດຍທາງຈິດ - ໝາຍຄວາມວ່າເຂົາເຈົ້າບໍ່ສາມາດຢຸດກິນຢາໄດ້ຍ້ອນວ່າເຂົາເຈົ້າຮູ້ສຶກວ່າຕ້ອງການມັນເພື່ອໃຫ້ໂຕເອງມ່ວນຊື່ນຫຼືຮູ້ສຶກມ່ວນໃຈ

## ຜົນສະທ້ອນລະຍະຍາວຂອງເອັກສເຕຊີມີຫຍັງແດ່?

ໄດ້ມີຫຼັກຖານວ່າເອັກສເຕຊີສາມາດໄປກະທົບສມອງໄດ້, ເຮັດໃຫ້ເກີດອາການກົດດັນແລະກັງວົນ. ຖ້າຈະເວົ້າໄປແລ້ວ ກໍມີຄົນຈຳນວນນ້ອຍທີ່ໃຊ້ເອັກສເຕຊີເປັນລະຍະຍາວ, ອາດຈະເປັນຍ້ອນວ່າ ອາການທີ່ກໍ່ໃຫ້ເກີດຄວາມ ສຸກມັກຖອຍລົງ ຖ້າໃຊ້ຢາເປັນລະຍະຍາວນານຕິດຕໍ່ກັນ.

## ຈະຮູ້ຢ່າງໃດວ່າຄົນຜູ້ນຶ່ງໃຊ້ເອັກສເຕຊີ?

ເນື່ອງຈາກວ່າ ຜົນສະທ້ອນຂອງເອັກສເຕຊີ (ແລະຢາເສບຕິດອື່ນໆອີກຫຼາຍຊນິດ) ມີອາການຄ້າຍຄື ກັນກັບລັກສນະນິສັຍຂອງວັຍຣຸ່ນໂດຍທົ່ວໆໄປ (ເຊັ່ນ ອາຣົມປ່ຽນແປງ, ນອນຕື່ນສວຍເປັນເວລາຍາວ ນານ), ກໍເລີຍເປັນການຍາກທີ່ຈະແຍກແຍະ. ພໍ່ແມ່ທີ່ມີຄວາມກັງວົນກ່ຽວກັບການໃຊ້ຢາເສບຕິດຂອງ ຄົນໜຸ່ມ ຄວນຕິດຕໍ່ຫາທ່ານໝໍ ຫຼື ສູນສຸຂພາບຊຸມຊົນ ເພື່ອຂໍເອົາຣາຍລະອຽດເຣື່ອງບໍຣິການກ່ຽວກັບ ການປິ່ນປົວ ຢາເສບຕິດແລະເຫຼົ້າ ໃນເຂດທ້ອງຖິ່ນຂອງຕົນ.

## ຈະເຮັດຢ່າງໃດຖ້າມີໃຜຜູ້ນຶ່ງເຈັບປ່ວຍຍ້ອນໃຊ້ຢາເອັກສເຕຊີ ຫຼື ຢາເສບຕິດຢ່າງອື່ນ?

ຖ້າທ່ານສົງສັຍວ່າມີການເຈັບປ່ວຍຍ້ອນ ເອັກສເຕຊີ, ໃຫ້ເອີ້ນຣົດພຍາບານທັນທີ (ຕຳຣວດຈະບໍ່ມາກ່ຽວຂ້ອງເມື່ອເອີ້ນເອົາຣົດພຍາບານ).

ຖ້າທ່ານ ຕ້ອງການ ຄວາມຊ່ວຍເຫຼືອເຣື່ອງການ ໂທຣະສັບເປັນພາສາອັງກິດ, ກະຣຸນາໂທຣະສັບຫາ ພແນກແປ ເອກກະສານ ແລະ ແປ ພາສາ (TIS) ເບີໂທຣ 131 450.
ທ່ານສາມາດຫາເບິ່ງຂໍ້ມູນເຣື່ອງສຸຂພາບເປັນພາສາລາວຕື່ມໄດ້ທາງອິນເຕີແນັດ ທີ່ ເວັບ ໄຊຕ໌ ຂອງ Multicultural Communication ທີ່ <http://mhcs.health.nsw.gov.au>



ເບີໂທຣະສັບເຫຼົ່ານີ້ ແມ່ນຖືກຕ້ອງໃນເວລາທີ່ພິມເອກກະສານນີ້ ແຕ່ວ່າອາດມີການປ່ຽນແປງ. ທ່ານອາດຈະຕ້ອງໄດ້ກວດເບິ່ງເລກໂທຣໃນສມຸດໂທຣະສັບເບິ່ງໃໝ່.